ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----=====000=========-----

ສຳນັກງານ ຄຄຊ

ພະແນກຄຸ້ມຄອງຕະຫຼາດຫຼັກຊັບ                                        ນະຄອນຫຼວງວຽງຈັນ, ວັນທີ 7 ເມສາ 2018

ຮຽນ: ທ່ານ ຫົວໜ້າສຳນັກງານ ຄຄຊ ທີ່ນັບຖື,

(ຜ່ານການປະກອບຄຳເຫັນຂອງ ທ່ານ ນາງ ນະຄອນສີ ມະໂນທັມ ຮອງຫົວໜ້າ ສຳນັກງານ ຄຄຊ)

ເລື່ອງ: ລາຍງານກ່ຽວກັບ ຄວາມເຄື່ອນໄຫວລ່າສຸດຂອງການພັດທະນາຕະຫຼາດທຶນ ໄຕມາດ 1 ປີ 2018 ຂອງບັນດາຕະຫຼາດຫຼັກຊັບປະເທດໃກ້ຄຽງ.

- ອີງຕາມພາລະບົດບາດຂອງພະແນກ ຄຸ້ມຄອງຕະຫຼາດຫຼັກຊັບ;
- ອີງຕາມການລາຍງານ ຜ່ານສື່ຕ່າງໆຂອງບັນດາຕະຫຼາດຫຼັກຊັບທີ່ກ່ຽວຂ້ອງ.

ຂ້າພະເຈົ້າ ທ້າວ ແກ້ວປະເສີດ ຄຳມີສີ ໜ່ວຍງານຕິດຕາມການຊື້-ຂາຍຫຼັກຊັບ ຂໍຖືເປັນກຽດຮຽນລາຍງານມາຍັງທ່ານຊາບ ກ່ຽວກັບຄວາມເຄື່ອນໄຫວລ່າສຸດຂອງການພັດທະນາຕະຫຼາດທຶນ ໄຕມາດ 1 ປີ 2018 ຂອງບັນດາຕະຫຼາດຫຼັກຊັບປະເທດໃກ້ຄຽງ ໂດຍມີລາຍລະອຽດ ດັ່ງນີ້:

ນັບຕັ້ງແຕ່ກະແສຄວາມແຮງຂອງສະກຸນເງິນດິຈິຕ້ອນໃນຊ່ວງກາງປີຫຼັງຂອງປີ 2017 ທີ່ຜ່ານມາໄດ້ສ້າງຄວາມກັງວົນ ແລະ ຈັບຕາເບິ່ງຂອງບັນດາປະເທດຜູ້ນຳໃນເອທີສາກົນ ແລະ ບັນດາທະນາຄານກາງຂອງປະເທດຕ່າງໆທີ່ຈະຕ້ອງຈັບຕາເຖິງຜົນກະທົບທີ່ອາດຈະເກີດຂຶ້ນກັບປະເທດຕົນຢ່າງໃກ້ຊິດ ແລະ ປາກົດການຂອງສະກຸນເງິນດິຈິຕ້ອນໃນຄັ້ງນີ້ (ໂດຍມີເຕັກໂນໂລຍີ ບ່ອກເຊນ ຫຼື Block Chain ຢູ່ເບື້ອງຫຼັງໃນການຂັບເຄື່ອນ) ໄດ້ກາຍເປັນບາດກ້າວທີ່ມີຜົນກະທົບຕໍ່ກັບຕະຫຼາດທຶນສາກົນ ແລະ ຕະຫຼາດທຶນໃນກຸ່ມປະເທດ ອາຊີ (ເຮັດໃຫ້ການຂັບເຄື່ອນ ແລະ ການເຄື່ອນໄຫວວຽກງານຕະຫຼາດທຶນໃນໄຕມາດ 1 ຂອງປະເທດຕ່າງໆ ຂ້ອນຂ້າງບໍ່ມີສີສັນ ແລະ ອາດບໍ່ໄດ້ຮັບຄວາມສົນໃຈເທົ່າທີ່ຄວນ) ໂດຍສະເພາະ ຕະຫຼາດທຶນໄທ ປະເທດເພື່ອນບ້ານ ດັ່ງເຫັນໄດ້ເດັ່ນຊັດໃນໄຕມາດ 1 ນີ້ ໂດຍມີລາຍລະອຽດດັ່ງນີ້:

1. <u>ຕະຫຼາດຫຼັກຊັບໄທ</u>

ຕະຫຼາດທຶນໄທ ພາຍໃຕ້ແຜນແມ່ບົດຂອງລັດຖະບານຄື Thailand 4.0 ທີ່ມີການກ່າວເຖິງ ແລະ ພັກດັນໃນບັນດາຂົງເຂດຫົວໜ່ວຍທຸລະກິດຕ່າງໆໃຫ້ກ້າວເດີນຕາມ (ໜຶ່ງໃນນັ້ນຄື ຕະຫຼາດທຶນ) ເມື່ອເຂົ້າເຖິງຊ່ວງໄຕມາດ 1 ປີ 2018 ທິດທາງການພັດທະນາຕະຫຼາດທຶນໄທແມ່ນຖືກຈັບຕາເບິ່ງທີ່ ການມາຂອງການລະດົມທຶນດ້ວຍການອອກຫຼຽນ

ດິຈິຕ້ອນຂອງບໍລິສັດຈົດທະບຽນໃນ ຕະຫຼາດຫຼັກຊັບ ໂດຍພາບລວມຂອງໄຕມາດ 1 ໃນ ຕະຫຼາດທຶນ ໄທ ແມ່ນສາມາດສັງລວມບັນດາປາກົດການພົ້ນເດັ່ນໄດ້ຄື ດັ່ງນີ້:

- ບໍລິສັດ ເຈມາກ (Jaymart) ໄດ້ປະກາດການລະດົມທຶນຂອງ ບໍລິສັດລູກ JVC ທີ່ຈະລະດົມທຶນດ້ວຍການອອກຫຼຽນ ເປັນບໍລິສັດທຳອິດ ໃນຕະຫຼາດທຶນ ໄທ ໂດຍອອກຫຼຽນດິຈິຕ້ອນຂອງຕົນໃນຊື່ JFin Coin ເພື່ອລະດົມທຶນ 640 ລ້ານບາດ (ໃຊ້ເວລາລະດົມທຶນສຳເລັດພາຍໃນເວລາພຽງ 55 ຊົ່ວໂມງ) ໂດຍການປະກາດການລະດົມທຶນຄັ້ງນີ້ບໍ່ໄດ້ແຈ້ງໃຫ້ ຕະຫຼາດຫຼັກຊັບ ແລະ ກລຕ ຊາບ (ເພາະອາດເນື່ອງຈາກການລະດົມທຶນລັກສະນະນີ້ບໍ່ໄດ້ຢູ່ໃນຂອບເຂດຮັບຜິດຊອບ ແລະ ຄຸ້ມຄອງຂອງ ຕະຫຼາດ ແລະ ກລຕ) ໂດຍການປະກາດດັ່ງກ່າວສົ່ງຜົນໃຫ້ລາຄາຮຸ້ນບໍລິສັດປັບຕົວເພີ່ມຂຶ້ນທັນທີ 20% ແລະ ຈາກການເຄື່ອນໄຫວຂອງບໍລິສັດ ເຈມາກ ໃນຄັ້ງນີ້ເຮັດໃຫ້ເລີ່ມມີຫຼາຍບໍລິສັດເລີ່ມມີທ່າທີຈະລະດົມທຶນໃນລັກສະນະນີ້ເພີ່ມຂຶ້ນ;

- ຈາກສະຖານະການຄວາມຮ້ອນແຮງຂອງສະກຸນເງິນດິຈິຕ້ອນໃນຊ່ວງທ້າຍປີ 2017 ທີ່ຜ່ານມາ ແລະ ປາກົດການ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດພາຍໃນປະເທດ ຈຶ່ງເຮັດໃຫ້ເກີດການປຶກສາຫາລືກັນຂອງພາກລັດ ໃນການຄົ້ນຄວ້າ ແລະ ຫາລືກັນເພື່ອອອກລະບຽບຄຸ້ມຄອງ ໂດຍສະເພາະການລະດົມທຶນແບບ ICO ໂດຍມອບໃຫ້ ກລຕ ເປັນເຈົ້າພາບໃນການຫາລືຮ່ວມກັບ ສຳນັກງານຄະນະກຳມະການປ້ອງກັນ ແລະ ປາບປາມການຟອກເງິນ, ກະຊວງການເງິນ ແລະ ທະນາຄານແຫ່ງ ປະເທດ ໄທ ໃນການອອກກົດໝາຍຄຸ້ມຄອງເຊິ່ງຄາດວ່າຈະສຳເລັດໃນເດືອນ ມີນາ (ປະຈຸບັນຍັງບໍ່ທັນອອກເທື່ອ ພ້ອມທັງປະກາດເລື່ອນການອອກລະບຽບອອກໄປໂດຍຍັງບໍ່ມີການກຳນົດເວລາຢ່າງແນ່ນອນ ແລະ ຕາມທ່າທີລ່າສຸດ ເຫັນວ່າຜູ້ຄຸ້ມຄອງການລະດົມທຶນລັກສະນະນີ້ ແລະ ການເຮັດທຸລະກຳສະກຸນເງິນດິຈິຕ້ອນແມ່ນໃຫ້ເປັນບົດບາດໜ້າທີ່ຂອງ ກລຕ) ໂດຍຄວາມເຄື່ອນໄຫວລ່າສຸດຂອງກົດໝາຍສະບັບດັ່ງກ່າວແມ່ນຈະມີການປະກາດເກັບອາກອນລາຍໄດ້ 15% ອີກດ້ວຍ;

- ຕໍ່ກັບປາກົດການຄວາມຮ້ອນແຮງຂອງການເຮັດທຸລະກຳເງິນດິຈິຕ້ອນພາຍໃນປະເທດ ເຮັດໃຫ້ບັນດາທະນາຄານທຸລະກິດພາຍໃນຕ່າງພ້ອມໃຈກັນປະກາດບໍ່ເກັບຄ່າທຳນຽມໃນການເຮັດທຸລະກຳຜ່ານ Mobile ແລະ Internet Banking ໃນຂະນະທີ່ເບື້ອງຕະຫຼາດທຶນ ເຊິ່ງກໍ່ຄື ກລຕ ແລະ ຕະຫຼາດຫຼັກຊັບ ໄທ ກໍ່ຈະເຮັດໄດ້ພຽງການໃຫ້ຂໍ້ມູນ ແລະ ຄວາມຮູ້ແກ່ຜູ້ລົງທຶນ ກ່ອນການຕັດສິນໃຈລົງທຶນໃນສະກຸນເງິນດິຈິຕ້ອນເທົ່ານັ້ນ;

- ທະນາຄານກາງ ປະເທດ ໄທ ກຽມແຜນທົດລອງອອກສະກຸນເງິນດິຈິຕ້ອນຂອງຕົນໂດຍໃຊ້ຊື່ສະກຸນເງິນດິຈິຕ້ອນຂອງຕົນວ່າ ອິນທະນົນ ໂດຍຈະມີທະນາຄານ 5 ແຫ່ງເຂົ້າຮ່ວມໃນໂຄງການດັ່ງກ່າວ ເຊິ່ງໂຄງການນີ້ແມ່ນຖືກສ້າງຂຶ້ນມາເພື່ອໃຊ້ສຶກສາ ເຕັກໂນໂລຢີ Blockchain ເພື່ອທົດສອບໃຊ້ສະກຸນເງິນດັ່ງກ່າວໃນການຊຳລະສະສາງທຸລະກຳລະຫວ່າງທະນາຄານກາງ ແລະ ບັນດາທະນາຄານທຸລະກິດພາຍໃນປະເທດ.

2. <u>ຕະຫຼາດຫຼັກຊັບ ມຽນມ້າ</u>

ໃນຊ່ວງໄຕມາດ 1 ປີ 2018 ແມ່ນເຫັນວ່າ ຕະຫຼາດຫຼັກຊັບ ມຽນມ້າ ຫຼື ຕະຫຼາດຫຼັກຊັບ ຢ້າງກຸ້ງ ມີການເຄື່ອນໄຫວທີ່ພົ້ນເດັ່ນ ດັ່ງນີ້:

- ໃນຕົ້ນປີ ຕະຫຼາດຫຼັກຊັບ ຢ້າງກຸ້ງ ໄດ້ຮັບ ບໍລິສັດຈົດທະບຽນ TMH Telecom Public (TMH) ເປັນບໍລິສັດທີ 5;

- ຕະຫຼາດຫຼັກຊັບ ຢ້າງກຸ້ງປະກາດ ປັບປ່ຽນເວລາຈັບຄູ່ຊື້-ຂາຍ (Date of Trading Times) ຈາກເດີມຄື 2 ຄັ້ງຕໍ່ວັນ (ເວລາ 10 ໂມງເຊົ້າ ແລະ 11 ໂມງເຊົ້າ) ເປັນ 4 ຄັ້ງຕໍ່ວັນ (ເວລາ 10 ໂມງເຊົ້າ, 11 ໂມງເຊົ້າ, 12 ໂມງເຊົ້າ ແລະ 13 ໂມງ) ເຊິ່ງຈະເລີ່ມປະຕິບັດໃນວັນທີ 30 ມີນາ 2018 ທີ່ຜ່ານມາ;

- ຕະຫຼາດຫຼັກຊັບ ຢ້າງກຸ້ງ ໄດ້ເພີ່ມຮູບແບບຂອງການເປີດເຜີຍຂໍ້ມູນ ນອກຈາກຈະມີການເປີດເຜີຍຂໍ້ມູນບໍລິສັດຈົດທະບຽນແລ້ວ ແມ່ນໄດ້ເພີ່ມການເປີດເຜີຍຂໍ້ມູນຕາມກຸ່ມຂະແໜງການ (Sector Report) ເຊິ່ງເລີ່ມເຜີຍແຜ່ສະບັບທຳອິດແມ່ນກຸ່ມຂະແໜງການທະນາຄານ (ເປັນພາສາມຽນມ້າ ສ່ວນສະບັບພາສາອັງກິດ ແມ່ນຍັງບໍ່ທັນມີເທື່ອ);

- ຕະຫຼາດຫຼັກຊັບ ຢ້າງກຸ້ງ ໄດ້ຈັດຕັ້ງພະແນກໃຫ້ຄຳປຶກສາການເຂົ້າຈົດທະບຽນ ຫຼື Listing Consulting Division ໃນວັນທີ 25 ມີນາ 2018 ເພື່ອໃຫ້ຂໍ້ມູນ (ລະບຽບ,ເງື່ອນໄຂການຈົດທະບຽນ), ຄວາມຮູ້ ແລະ ຄວາມເຂົ້າໃຈໃຫ້ແກ່ຜູ້ປະກອບການ ເຊິ່ງຄາດວ່າ ການສ້າງຕັ້ງພະແນກດັ່ງກ່າວຈະຊ່ວຍໃຫ້ຜູ້ປະກອບການ ແລະ ຕະຫຼາດທຶນມີຄວາມໃກ້ຊິດ ແລະ ເຂົ້າໃຈກັນຫຼາຍຂຶ້ນ ຄືຈະເຮັດໃຫ້ບໍລິສັດທີ່ຕ້ອງການທຶນ ຮູ້ເງື່ອນໄຂ ແລະ ແນວທາງການເຂົ້າເຖິງແຫຼ່ງທຶນໃນຕະຫຼາດ ແລະ ຕະຫຼາດກໍ່ຈະໄດ້ຮູ້ບັນຫາຂອງຜູ້ປະກອບການເພື່ອຊອກຫາແນວທາງໃນການສົ່ງເສີມ;

- ຕະຫຼາດຫຼັກຊັບ ຢ້າງກຸ້ງ ຂຶ້ນແຜນໂປໂໝດຕົນເອງໃນວັນທີ 18 ເມສາ ທີ່ ກຸງໂຕກຽວ ປະເທດ ຍີ່ປຸ່ນ ໂດຍການສະໜັບສະໜູນຈາກພາກລັດ ແລະ ເອກະຊົນຂອງຍີ່ປຸ່ນ ເພື່ອດຶງດູດການລົງທຶນຈາກນັກລົງທຶນປະເທດ ຍີ່ປຸ່ນ ກ່ອນການປະກາດໃຊ້ກົດໝາຍຜ່ອນຄາຍລະບຽບການລົງທຶນຈາກຕ່າງປະເທດສະບັບໃໝ່ ໂດຍທາງຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບ ຢ້າງກຸ້ງ ໄດ້ກ່າວຕໍ່ສື່ມວນຊົນວ່າ ຈະມີອີກ 4 ບໍລິສັດກຽມນຳຮຸ້ນເຂົ້າຈົດທະບຽນຊື້-ຂາຍໃນຕະຫຼາດພາຍໃນປີນີ້ ເຊິ່ງຈະເຮັດໃຫ້ຕະຫຼາດຫຼັກຊັບ ຢ້າງກຸ້ງ ມີບໍລິສັດຈົດທະບຽນທັງໝົດ 9 ບໍລິສັດ ໂດຍປະຈຸບັນ ທາງຕະຫຼາດໄດ້ກຽມແຜນການ ສ້າງຕັ້ງຄະນະເຮັດວຽກພິເສດ (ຄະນະສະເພາະກິດ) ໃນດ້ານກົດໝາຍ, ການບັນຊີ ແລະ ນາຍໜ້າຊື້-ຂາຍຫຼັກຊັບ ເພື່ອໃຫ້ຄວາມຊ່ວຍເຫຼືອບໍລິສັດໃນມຽນມ້າໃນການສະເໜີຂາຍຮຸ້ນແກ່ມວນຊົນ ໂດຍໄດ້ຮັບການສະໜັບສະໜູນທາງເຕັກນິກຈາກອົງການຄວາມຮ່ວມມືລະຫວ່າງປະເທດແຫ່ງຍີ່ປຸ່ນ (Jica) ເຊິ່ງເປັນໜ່ວຍງານຊ່ວຍເຫຼືອດ້ານການພັດທະນາຈາກໂຕກຽວ ເຊິ່ງທາງຕະຫຼາດໄດ້ປະມານການວ່າຈະມີປະມານ 70 ບໍລິສັດທີ່ມີສັກກະຍາພາບພຽງພໍທີ່ຈະເຂົ້າມາຈົດທະບຽນໃນຕະຫຼາດໄດ້ໃນແງ່ມາດຖານການບັນຊີ ແລະ ຄວາມສາມາດໃນການເຮັດກຳໄລຕາມຂໍ້ກຳນົດຂອງຕະຫຼາດເພື່ອສະເໜີຂາຍຮຸ້ນຕໍ່ມວນຊົນ (IPO).

3. ຕະຫຼາດຫຼັກຊັບ ກຳປູເຈຍ

ໃນຊ່ວງໄຕມາດ 1 ປີ 2018 ແມ່ນເຫັນວ່າ ຕະຫຼາດຫຼັກຊັບ ກຳປູເຈຍ ມີການເຄື່ອນໄຫວທີ່ພົ້ນເດັ່ນ ດັ່ງນີ້:

- ຕະຫຼາດຫຼັກຊັບ ກຳປູເຈຍ ໄດ້ພັດທະນາແອບພິເຄຊັ່ນມືຖືຂອງຕົນເອງເຊິ່ງຈະເປັນແຫຼ່ງຂໍ້ມູນກ່ຽວກັບຕະຫຼາດຫຼັກຊັບ ກຳປູເຈຍ ທີ່ສາມາດເບິ່ງໄດ້ທັງຂໍ້ມູນການເຄື່ອນໄຫວຊື້-ຂາຍຫຼັກຊັບ, ການເປີດເຜີຍຂໍ້ມູນບໍລິສັດຈົດທະບຽນ ແລະ ຄວາມຮູ້ກ່ຽວກັບຕະຫຼາດຫຼັກຊັບ ເປັນຕົ້ນ;

- ຕະຫຼາດຫຼັກຊັບ ກຳປູເຈຍ ປະກາດການນຳໃຊ້ລະບົບການຊື້-ຂາຍແບບ Negotiated Trading Method (NTM) ໃນຊ່ວຍຜູ້ລົງທຶນໃນການເຈລະຈາຈັບຄູ່ຊື້-ຂາຍກັນຈຳນວນຫຼາຍໃນຄັ້ງດຽວ, ເພີ່ມລະບົບການສົ່ງຄຳສັ່ງຊື້-ຂາຍຫຼັກຊັບແບບ Market Order ແລະ ປັບເປີເຊັນເພດານລາຄາຮຸ້ນຕໍ່ວັນຈາກ 5% ມາເປັນ 10%.

4. ຄຳເຫັນວິຊາການ

ຕາມທ່າທີ ແລະ ສະພາບການຂອງສາກົນແມ່ນເຫັນວ່າ ການລະດົມທຶນດ້ວຍຮູບແບບ ICO ແມ່ນຮູບແບບການລົງທຶນທີ່ມີຄວາມສ່ຽງ ແລະ ຖືກຈັບຕາໃນກຸ່ມຜູ້ຄຸ້ມຄອງໃນຕ່າງປະເທດ ໃນຂະນະທີ່ການເກີດ ແລະ ມີສັນຍານການຂະຫຍາຍຕົວຂອງການລະດົມທຶນແບບ ICO ໃນໄທກໍ່ອາດເລີ່ມເປັນບັນຫາທີ່ທາງພາກລັດຂອງປະເທດໄທ ພວມໃຫ້ຄວາມສຳຄັນໃນການຫາວິທີອອກກົດໝາຍເພື່ອຄວບຄຸມ ແລະ ຄຸ້ມຄອງໄປຄຽງຄູ່ກັບສະກຸນເງິນດິຈິຕ້ອນທີ່ຈະມີການເຮັດທຸລະກຳ ແລະ ເຄື່ອນໄຫວພາຍໃນປະເທດຕົນ ໂດຍຫາກພິຈາລະນາສະຖານະການ ແລະ ບັນຫາດັ່ງກ່າວອາດເຫັນວ່າ ເປັນບັນຫາທີ່ໄກຈາກບ້ານເຮົາຫຼາຍ ແຕ່ເຫັນວ່າ ຫາກການລະດົມທຶນລັກສະນະນີ້ປະສົບຜົນສຳເລັດ ແລະ ຄຶກຄື້ນໃນປະເທດໄທເມື່ອໃດ ICO ດັ່ງກ່າວນີ້ ກໍ່ມີໂອກາດຄວາມເປັນໄປໄດ້ທີ່ວັນໜຶ່ງຈະຂ້າມຂອງມາເຖິງຫົວໜ່ວຍທຸລະກິດໃນປະເທດເຮົາໄດ້ຄືກັນ. ໃນຂະນະທີ່ບັນດາຕະຫຼາດເກີດໃໝ່ເອງກໍ່ເລີ່ມມີການສົ່ງສັນຍານເຖິງຄວາມພະຍາຍາມໃນການພັດທະນາຕົນເອງທັງທາງດ້ານ ລະບົບ, ການບໍລິການ ແລະ ການເຈາະຕະຫຼາດຕ່າງປະເທດ ໂດຍເຮັດຜ່ານພັນທະມິດທຸລະກິດຂອງຕົນ ເຊິ່ງເຫັນວ່າ ການພັດທະນາຂອງບັນດາຕະຫຼາດດັ່ງກ່າວນີ້ ຕະຫຼາດຫຼັກຊັບ ຢ້າງກຸ້ງ ແມ່ນມີຄວາມໜ້າສົນໃຈ ແລະ ໜ້າຈັບຕາຫຼາຍກວ່າໝູ່ ໃນເວລານີ້.

ດັ່ງນັ້ນ, ຈຶ່ງຂໍຮຽນລາຍງານທ່ານເພື່ອຊາບ ແລະ ມີທິດຊີ້ນຳຕາມຄວາມເໝາະສົມດ້ວຍ.

ດ້ວຍຄວາມເຄົາລົບ ແລະ ນັບຖືຢ່າງສູງ

ຫົວໜ້າພະແນກຄຸ້ມຄອງຕະຫຼາດຫຼັກຊັບ | ຜູ້ລາຍງານ

[signature] ບຸນຈິງ ກາງຄຳ | [signature] ແກ້ວປະເສີດ ຄຳພັນ

[illegible]

10/5/18 [signature]